# ພະແນກພັດທະນາການບໍລິການ

1215 O Street, MS 9-90
Sacramento, CA 95814
TTY: 711
(833) 421-0061

ວັນທີ 12 ກັນຍາ 2022

ເຖິງ: ຜູ້ອໍານວຍການສູນພາກພື້ນ

ເລື່ອງ: ໂຄງການ ການກໍານົດໂດຍຕົນເອງ: ການບໍລິການ ການຄຸ້ມຄອງການເງິນ ການຈ່າຍເງິນ ແລະ ການແຈ້ງເຕືອນ

ດໍາລັດວ່າດ້ວຍ ສະຫວັດດີການ ແລະ ສະຖາບັນ (W&I) ມາດຕາ 4639.6 ອະນຸຍາດໃຫ້ຫົວໜ້າກົມບໍລິການພັດທະນາ (ກົມ) ອອກຄໍາສັ່ງໃຫ້ສູນໃນພາກພື້ນ ຕາມທີ່ຫົວໜ້າກົມເຫັນວ່າມີຄວາມຈໍາເປັນ ເພື່ອປົກປ້ອງສິດຜູ້ບໍລິໂພກ, ສຸຂະພາບ, ຄວາມປອດໄພ ຫຼື ສະຫວັດດີການ ຫຼື ຕາມລະຫັດ W&I ມາດຕາ 4434. ສູນພາກພື້ນຕ້ອງປະຕິບັດຕາມຄໍາແນະນໍາທີ່ອອກໂດຍທ່ານຫົວໜ້າກົມ ໂດຍອີງຕາມພາກນີ້.

ເພື່ອຕອບສະໜອງຄວາມກັງວົນທີ່ຍົກຂຶ້ນມາ ໂດຍສະມາຊິກຄອບຄົວ ແລະ ຜູ້ໃຫ້ບໍລິການດ້ານການຄຸ້ມຄອງທາງດ້ານການເງິນ (FMS) ກ່ຽວກັບຂັ້ນຕອນການອອກໃບແຈ້ງໜີ້ ແລະ ການຈ່າຍເງິນ ແລະ ເພື່ອຮັບປະກັນການບໍລິການ ແລະ ການສະໜັບສະໜູນທີ່ສໍາຄັນຕໍ່ສຸຂະພາບ, ຄວາມປອດໄພ ຫຼື ສະຫວັດດີການຂອງຜູ້ເຂົ້າຮ່ວມໂຄງການກໍານົດໂດຍຕົນເອງແມ່ນບໍ່ໄດ້ຖືກຂັດຂວາງ, ກົມກໍາລັງຮຽກຮ້ອງໃຫ້ສູນພາກພື້ນເພື່ອ:

1. ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ຕຸລາ 2022, ແລະ ຈົນກວ່າຄໍາສັ່ງນີ້ຈະຖືກຍົກເລີກ, ແຈ້ງໃຫ້ຜູ້ໃຫ້ບໍລິການ FMS ພາຍໃນສາມວັນລັດຖະການກ່ອນທີມງານວາງແຜນມີການປັບປຸງແຜນການໃຊ້ຈ່າຍຂອງຜູ້ເຂົ້າຮ່ວມເປັນສະບັບສຸດທ້າຍ.

2. ມີຜົນບັງຄັບໃຊ້ຕັ້ງແຕ່ວັນທີ 1 ຕຸລາ 2022 ຫາວັນທີ 31 ມັງກອນ 2023, ກໍານົດເວລາທີ່ສູນພາກພື້ນຈະສະໜອງການຈ່າຍເງິນໃຫ້ຜູ້ໃຫ້ບໍລິການ FMS ເປັນປະຈໍາອາທິດ ລວມທັງການບໍລິການທີ່ສະໜອງໃຫ້ໃນເດືອນປັດຈຸບັນ, ຕາມໃບແຈ້ງໜີ້ທີ່ໄດ້ສົ່ງໃຫ້ໂດຍຜູ້ໃຫ້ບໍລິການ FMS.

ຖ້າຜູ້ເຂົ້າຮ່ວມ ແລະ/ຫຼື ຄອບຄົວຂອງເຂົາເຈົ້າມີຄຳຖາມກ່ຽວກັບຄຳສັ່ງນີ້, ເຂົາເຈົ້າຄວນຕິດຕໍ່ກັບສູນພາກພື້ນຂອງເຂົາເຈົ້າ. ຄຳຖາມຈາກສູນກາງພາກພື້ນຄວນຈະຖືກສົ່ງໄປຫາ sdp@dds.ca.gov.

ດ້ວຍຄວາມເຄົາລົບ,

*ຕົ້ນສະບັບລົງນາມໂດຍ:*

NANCY BARGMANN
ຜູ້ອຳນວຍການ

ສຳເນົາເຖິງ:
ຜູ້ບໍລິຫານໃນສູນພາກພື້ນ
ຜູ້ອຳນວຍການສູນພາກພື້ນຂອງການບໍລິການຜູ້ບໍລິໂພກ
ຜູ້ອຳນວຍການຝ່າຍບໍລິການຊຸມຊົນຂອງສູນປພາກພື້
ສະມາຄົມໜ່ວຍງານຂອງສູນປະຈຳເຂດ
ສະພາແຫ່ງລັດກ່ຽວກັບຄວາມພິການດ້ານການພັດທະນາການ
Brian Winfield, DDS
Carla Castañeda, DDS
Jim Knight, DDS
Ernie Cruz, DDS
Tim Travis, DDS